**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 80 / **ສພຊ**

ນະຄອນຫຼວງວຽງຈັນ, ວັນທີ 30 / 12 / 22

# ມະຕິ

# ກອງປະຊຸມສະພາແຫ່ງຊາດ

# ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈໍາປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2023

- ອີງຕາມ ກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2020 ມາດຕາ 59 ຂໍ້ທີ 4 ກ່ຽວກັບການພິຈາລະນາຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈໍາປີຜ່ານມາ ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີຕໍ່ໜ້າ;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 29/ສພຊ, ລົງວັນທີ 16 ພະຈິກ 2021 ວ່າດ້ວຍການຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານ ປະຈໍາປີ 2021 ແລະ ແຜນການ ປະຈໍາປີ 2022 ຂອງສະພາແຫ່ງຊາດ.

ຜ່ານການພິຈາລະນາຢ່າງເລິກເຊິ່ງ, ກວ້າງຂວາງຂອງສະມາຊິກສະພາແຫ່ງຊາດ ຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈໍາປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2023 ທີ່ສະເໜີໂດຍ ຜູ້ຕາງໜ້າຄະນະປະຈໍາສະພາແຫ່ງຊາດ ໃນວາລະການດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງວັນທີ 28 ທັນວາ 2022

## ກອງປະຊຸມ ຕົກລົງ:

**ມາດຕາ 1** ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈໍາປີ 2022

ກອງປະຊຸມສະແດງຄວາມຊົມເຊີຍຄະນະປະຈໍາສະພາແຫ່ງຊາດ, ບັນດາກໍາມາທິການສະພາແຫ່ງຊາດ, ຄະນະເລຂາທິການສະພາແຫ່ງຊາດ ແລະ ກົງຈັກທີ່ຄະນະປະຈໍາສະພາແຫ່ງຊາດສ້າງຕັ້ງ ທີ່ໄດ້ມີຄວາມພະຍາຍາມສູ້ຊົນຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຊຶ່ງສາມາດຍາດໄດ້ຜົນງານພົ້ນເດັ່ນໃນຫຼາຍດ້ານ. ພ້ອມກັນນີ້ ກອງປະຊຸມເຫັນດີຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈໍາປີ 2022 ຊຶ່ງຍົກໃຫ້ເຫັນຜົນສໍາເລັດທີ່ຍາດມາໄດ້, ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້. ອັນພົ້ນເດັ່ນ, ສະພາແຫ່ງຊາດ ໄດ້ຍົກສູງຄຸນນະພາບໃນການຄົ້ນຄວ້າພິຈາລະນາຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍສໍາເລັດ ຈໍານວນ 21 ສະບັບ, ຄົ້ນຄວ້າປັບປຸງແຜນການສ້າງ ແລະ ປັບປຸງກົດໝາຍ ປີ 2023-2025; ການພິຈາລະນາຕົກລົງບັນຫາສໍາຄັນພື້ນຖານຂອງປະເທດຊາດ ຢູ່ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ, ການເຄື່ອນໄຫວຕິດຕາມກວດກາ ໄດ້ຍົກສູງປະສິດທິພາບໃນການຕິດຕາມກວດກາຢູ່ກອງປະຊຸມສະພາແຫ່ງຊາດ ດ້ວຍການປະກອບຄໍາເຫັນ, ຊັກຖາມ; ຊີ້ແຈງ; ດໍາເນີນກອງ

ປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບພາກສ່ວນກ່ຽວຂ້ອງ; ວຽກງານສາຍດ່ວນ, ການແກ້ໄຂຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ; ເອົາໃຈໃສ່ການສ້າງຄວາມເຂັ້ມແຂງໃຫ້ສະມາຊິກສະພາແຫ່ງຊາດ ແລະ ເສນາທິການ; ການເຄື່ອນໄຫວວຽກງານຕ່າງປະເທດ ແລະ ອື່ນໆ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ ກໍຍັງມີບາງດ້ານ ທີ່ສະພາແຫ່ງຊາດ ຈະຕ້ອງໄດ້ພ້ອມກັນສືບຕໍ່ປັບປຸງແກ້ໄຂໃນຕໍ່ໜ້າ ເປັນຕົ້ນ ການຕິດຕາມຊຸກຍູ້ພາກສ່ວນກ່ຽວຂ້ອງແຕ່ຫົວທີ ເພື່ອເຮັດໃຫ້ການສ້າງ ແລະ ປັບປຸງກົດໝາຍ ຮັບປະກັນດ້ານເນື້ອໃນສອດຄ່ອງຕາມແນວທາງນະໂຍບາຍ ແລະ ສະພາບເສດຖະກິດ-ສັງຄົມ, ການປະກາດໃຊ້ກົດໝາຍທີ່ກອງປະຊຸມສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວ ໃຫ້ທັນຕາມກຳນົດເວລາ. ພ້ອມທັງການກະກຽມເນື້ອໃນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃຫ້ຮັບປະກັນຄຸນນະພາບ ແລະ ທັນເວລາ; ຍົກສູງປະສິດທິຜົນການຕິດຕາມກວດກາ ຂອງບັນດາກົງຈັກສະພາແຫ່ງຊາດ, ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ດ້ວຍການໃຫ້ຄຳແນະນຳ, ສົມທົບກັບພາກສ່ວນກ່ຽວຂ້ອງ ແກ້ໄຂບັນຫາທີ່ເກີດຂຶ້ນໃຫ້ໄດ້ຢ່າງຂາດຕົວ ແລະ ເພີ່ມທະວີການສ້າງຄວາມເຂັ້ມແຂງ ພ້ອມກັນນັ້ນ, ກໍເຫັນດີເປັນເອກະພາບຕໍ່ກັບຄຳຄິດຄຳເຫັນ ຂອງອົງການແນວລາວສ້າງຊາດ ທີ່ໄດ້ຕິດຕາມກວດກາການເຄື່ອນໄຫວຂອງສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດໃນການຈັດຕັ້ງປະຕິບັດກົດໝາຍທີ່ກ່ຽວຂ້ອງ ເພື່ອຮັບປະກັນໃຫ້ມີການປັບປຸງທີ່ດີຂຶ້ນ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023**

ກອງປະຊຸມເຫັນດີຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ດັ່ງນີ້:

**1. ດ້ານນິຕິບັນຍັດ:** ສະພາແຫ່ງຊາດ ເອົາໃຈໃສ່ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍໃຫ້ບັນລຸຕາມຄາດໝາຍ ຈຳນວນ 25 ສະບັບ. ໃນນີ້, ກົດໝາຍສ້າງໃໝ່ 9 ສະບັບ, ກົດໝາຍປັບປຸງ 16 ສະບັບ; ເພີ່ມທະວີການທາບທາມຮ່າງກົດໝາຍ ໃຫ້ກວ້າງຂວາງ, ເລິກເຊິ່ງ; ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ສຳເລັດທັນເວລາ, ມີຄຸນນະພາບ; ເພີ່ມທະວີການໂຄສະນາເຜີຍແຜ່ລັດຖະທຳມະນູນ, ກົດໝາຍໃນຂົງເຂດຂອງສະພາແຫ່ງຊາດ ຕິດພັນກັບການຕິດຕາມກວດກາ ແລະ ຊຸກຍູ້ການຜັນຂະຫຍາຍບາງມາດຕາຂອງກົດໝາຍ, ການໂຄສະນາເຜີຍແຜ່ກົດໝາຍໃນຂົງເຂດອື່ນ ແລະ ການຕີຄວາມໝາຍ, ອະທິບາຍກົດໝາຍໃຫ້ດີກວ່າເກົ່າ.

**2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ:** ເອົາໃຈໃສ່ຍົກສູງຄວາມຮັບຜິດຊອບຂອງສະພາແຫ່ງຊາດ ໃນການຄົ້ນຄວ້າພິຈາລະນາບັນຫາສຳຄັນຕ່າງໆ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໂດຍຜ່ານກອງປະຊຸມສະໄໝສາມັນ ເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX; ເພີ່ມທະວີການປະສານສົມທົບເຊິ່ງກັນ ແລະ ກັນ ຂອງບັນດາກົງຈັກພາຍໃນສະພາແຫ່ງຊາດ ແລະ ລະຫວ່າງສະພາແຫ່ງຊາດ ກັບບັນດາອົງການອື່ນຂອງລັດ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຮັບປະກັນການປະຕິບັດສິດ, ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ໃນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍຜ່ານກອງປະຊຸມປະຈຳເດືອນຂອງຕົນ ເພື່ອຮັບປະກັນຄຸນນະພາບ ແລະ ປະສິດທິຜົນ.

3. ດ້ານການຕິດຕາມກວດກາ: ເພີ່ມທະວີຄວາມຮັບຜິດຊອບບັນດາກົງຈັກຂອງສະພາແຫ່ງຊາດ, ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ໃນການສ້າງແຜນການ ແລະ ຜັນຂະຫຍາຍແຜນການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ ເປັນແຜນການລະອຽດ, ມີຈຸດສຸມ ແລະ ສູ້ຊົນຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ຊຶ່ງປີ 2023 ສະພາແຫ່ງຊາດ ຈະສຸມໃສ່ຕິດຕາມກວດກາບັນຫາສຳຄັນຕົ້ນຕໍ ດັ່ງນີ້:

1) ຕິດຕາມກວດກາ ດ້ວຍການຮັບຟັງລາຍງານຂອງລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຢູ່ກອງປະຊຸມສະພາແຫ່ງຊາດ ໃນການຄົ້ນຄວ້າ, ພິຈາລະນາ ລວມທັງການຊັກຖາມ ແລະ ຊີ້ແຈງຕໍ່ບັນຫາພົ້ນເດັ່ນຂອງສັງຄົມ;

2) ຕິດຕາມກວດກາ ຕໍ່ການດຳເນີນກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບຄະນະລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ສູນກາງແນວລາວສ້າງຊາດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອປຶກສາຫາລື ໃຫ້ມີຄວາມເປັນເອກະພາບໃນການແກ້ໄຂບັນຫາທີ່ເຄັ່ງຮ້ອນຂອງສັງຄົມ;

3) ຕິດຕາມກວດກາຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ; ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝວິສາມັນ ເທື່ອທີ 1; ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 3, ເທື່ອທີ 4 ແລະ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX;

4) ຕິດຕາມກວດກາໂຄງການລົງທຶນຂະໜາດໃຫຍ່ຈຳນວນໜຶ່ງ ທີ່ເຫັນວ່າມີຄວາມຫຍຸ້ງຍາກ, ສັບສົນ ຫຼື ມີຜົນກະທົບຢ່າງຫຼວງຫຼາຍ ຕໍ່ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ;

5) ຕິດຕາມກວດກາການຄຸ້ມຄອງ, ນຳໃຊ້ກອງທຶນປະກັນສຸຂະພາບແຫ່ງຊາດ ແລະ ກອງທຶນປະກັນສັງຄົມ; ການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ທີ່ຕິດພັນກັບຄວາມສະເໝີພາບຍິງ-ຊາຍ;

6) ຕິດຕາມກວດກາຜົນການແກ້ໄຂຄຳສະເໜີປະຊາຊົນ ຕາມບົດລາຍງານຂອງອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ສະເໜີຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

7) ຕິດຕາມກວດກາ ຜ່ານການຮັບ ແລະ ພິຈາລະນາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ; ຈັດຕັ້ງການຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ໃນໄລຍະດຳເນີນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ;

8) ດຳເນີນການປະເມີນຜົນດ້ວຍການລົງຄະແນນສຽງ ຫຼື ດ້ວຍການໃຫ້ຄະແນນໄວ້ວາງໃຈ ໃນການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ລວມທັງການໃຫ້ຄະແນນຕໍ່ເປົ້າໝາຍທີ່ລາຍງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ຢູ່ກອງປະຊຸມສະພາແຫ່ງຊາດ;

9) ຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ແລະ ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈຳນວນ 3 ສະບັບ ຕາມແຜນການສະເພາະ ແລະ ກົດໝາຍຂົງເຂດຕ່າງໆຈຳນວນໜຶ່ງ ທີ່ເຫັນວ່າມີຄວາມຈຳເປັນ, ຮີບດ່ວນ. ມອບໃຫ້ແຕ່ລະກຳມາທິການ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຕາມຂົງເຂດຕົນຮັບຜິດຊອບ;

10) ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**4. ການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ:**

ສະພາແຫ່ງຊາດ ເອົາໃຈໃສ່ນຳພາ-ຊີ້ນຳວຽກງານການສ້າງຄວາມເຂັ້ມແຂງໃຫ້ແກ່ຕົນ ໃນປີ 2023 ເຊິ່ງຈະສຸມໃສ່ການຈັດຕັ້ງປະຕິບັດຫົວຂໍ້ຕ່າງໆ ດັ່ງນີ້:

1) ເພີ່ມທະວີວຽກງານການເມືອງ-ແນວຄິດ ຕິດພັນກັບການຝຶກອົບຮົມຍົກລະດັບທາງດ້ານວິຊາສະເພາະ ແລະ ການປະຕິບັດນະໂຍບາຍດ້ານຕ່າງໆ ຕໍ່ສະມາຊິກສະພາແຫ່ງຊາດ, ພະນັກງານ, ສະມາຊິກພັກ, ລັດຖະກອນ ຂອງສະພາແຫ່ງຊາດ; ຍູ້ແຮງຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ເຮັດໃຫ້ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ມີການຫັນປ່ຽນທີ່ຕັ້ງໜ້າເຂົ້າສູ່ລວງເລິກ;

2) ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເພື່ອຮັບປະກັນການປະຕິບັດໜ້າທີ່ ຢູ່ກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມສະພາປະຊາຊົນຂັ້ນແຂວງ ໃນການພິຈາລະນາຮັບຮອງເອົາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ການພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ແລະ ການຕິດຕາມກວດກາ ໃຫ້ນັບມື້ມີປະສິດທິຜົນສູງຂຶ້ນ;

3) ການບຳລຸງຍົກລະດັບໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໂດຍສະເພາະ ກຳມະການຂອງແຕ່ລະກຳມາທິການ ໃຫ້ໄດ້ເຂົ້າຮ່ວມຊຸດຝຶກອົບຮົມດ້ານທັກສະຕ່າງໆ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນໃນຫົວຂໍ້ຕ່າງໆຂອງແຕ່ລະຂົງເຂດ ຢູ່ພາຍໃນ ແລະ ຕ່າງປະເທດ; ຍົກສູງຂີດ

ຄວາມສາມາດຂອງພະນັກງານ-ລັດຖະກອນ ພາຍໃນກົງຈັກຂອງສະພາແຫ່ງຊາດ ແລະ ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ ຕາມກົດໝາຍ ແລະ ລະບຽບການກຳນົດໄວ້;

4) ເອົາໃຈໃສ່ຄົ້ນຄວ້າວິທະຍາສາດ, ທັກສະ ແລະ ປຶ້ມຄູ່ມື ທີ່ພົວພັນກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອເປັນບ່ອນອີງໃຫ້ແກ່ການປະຕິບັດໜ້າທີ່ວຽກງານຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ມີປະສິດທິຜົນດີຂຶ້ນ;

5) ສ້າງຄວາມເຂັ້ມແຂງໃຫ້ແກ່ກົງຈັກເລຂາທິການຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ໃນນີ້ ສຸມໃສ່ບຳລຸງ ແລະ ສ້າງພະນັກງານວິຊາການປະເພດຕ່າງໆ ໃຫ້ເປັນມືອາຊີບທີ່ຊຳນານງານການແຜນການທີ່ວາງໄວ້;

6) ຮັບປະກັນງົບປະມານໃຫ້ແກ່ການເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ; ຄຸ້ມຄອງ, ນຳໃຊ້ງົບປະມານ ແລະ ທຶນຊ່ວຍເຫຼືອຂອງອົງການສາກົນ, ຊັບສິນຂອງສະພາແຫ່ງຊາດ, ພາຫະນະ, ອຸປະກອນ ທີ່ຈຳເປັນໃຫ້ຮັບປະກັນແກ່ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ.

5. ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ

1) ຍົກສູງຄວາມຮັບຜິດຊອບໃນວຽກງານຄຸ້ມຄອງສະມາຊິກສະພາແຫ່ງຊາດ ເປັນຕົ້ນ ດ້ານສະຖິຕິ, ຜົນງານໃນແຕ່ລະໄລຍະ, ເພີ່ມທະວີການປະສານສົມທົບ ກັບສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງແຂວງ ສືບຕໍ່ຄົ້ນຄວ້າປັບປຸງກົງຈັກຊ່ວຍວຽກຂອງສະພາປະຊາຊົນຂັ້ນແຂວງ, ເກັບກຳຂໍ້ມູນແກ່ທີ່ອທີ ເພື່ອກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງໃນຕໍ່ໜ້າ;

2) ເອົາໃຈໃສ່ສົມທົບກັບສະພາປະຊາຊົນຂັ້ນແຂວງ ໃນການປັບປຸງລະບອບແບບແຜນວິທີເຮັດວຽກ ແລະ ກົນໄກການປະສານງານ ແນໃສ່ຍົກສູງບົດບາດການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໃຫ້ຮັບປະກັນປະສິດທິຜົນສູງຂຶ້ນ, ເອົາໃຈໃສ່ກະກຽມເນື້ອໃນກອງປະຊຸມສະພາປະຊາຊົນຂັ້ນແຂວງ, ການຕິດຕາມບັນຫາສຳຄັນຂອງທ້ອງຖິ່ນ ແລະ ການຕິດຕາມກວດກາ; ການສ້າງນິຕິກຳຂອງທ້ອງຖິ່ນ; ລາຍງານຜົນການເຄື່ອນໄຫວວຽກງານໃຫ້ຄະນະປະຈຳສະພາແຫ່ງຊາດເປັນປົກກະຕິຕາມລະບຽບການທີ່ກຳນົດໄວ້.

6. ການເຄື່ອນໄຫວວຽກງານການຕ່າງປະເທດ: ເອົາໃຈໃສ່ຄົ້ນຄວ້າກຳນົດແຜນການເຄື່ອນໄຫວວຽກງານການຕ່າງປະເທດ ປີ 2023 ຢ່າງມີຈຸດສຸມ ແລະ ສອດຄ່ອງກັບສະພາບເງື່ອນໄຂໃນໄລຍະໃໝ່ ໂດຍສະເພາະການກະກຽມເປັນເຈົ້າພາບກອງປະຊຸມສຸດຍອດສະພາແຫ່ງຊາດ 3 ປະເທດ ລາວ-ຫວຽດນາມ-ກຳປູເຈຍ; ກະກຽມກອງປະຊຸມໃຫຍ່ສະມັດຊາລັດຖະສະພາ ລະຫວ່າງຊາດອາຊຽນ ຄັ້ງທີ 45 ໃນປີ 2024 ເພື່ອຍົກສູງບົດບາດຂອງສະພາແຫ່ງຊາດແຫ່ງ ສປປ ລາວ ໃນເວທີພາກພື້ນ-ສາກົນ ແລະ ການເຄື່ອນໄຫວວຽກງານຕ່າງໆ;

7. ການເຄື່ອນໄຫວວຽກງານປົ້ນອ້ອມອື່ນໆ: ສືບຕໍ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອແກ້ໄຂບັນຫາການສ້າງພື້ນຖານໂຄງລ່າງຂອງສະພາປະຊາຊົນຂັ້ນແຂວງ, ການສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ, ກົງຈັກຂອງສະພາແຫ່ງຊາດ, ກົງຈັກທີ່ຄະນະປະຈຳສະພາແຫ່ງຊາດສ້າງຕັ້ງ, ສະພາປະຊາຊົນຂັ້ນແຂວງ, ບັນດາອົງການຂອງລັດ, ພາກສ່ວນກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ